## ຄວາມປອດພັຍຂອງຂໍ້ມູນ ສຸຂພາບ

ພວກເຮົາປະຕິບັດຕາມກົດລະບຽບ ແລະ ນະໂຍບາຍກ່ຽວກັບຄວາມປອດພັຍຂອງການ ເກັບມ້ຽນຂໍ້ມູນສ່ວນຕົວໃນທຸກຮູບແບບ. ພວກເຮົາ ປັບປຸງ ແລະ ກວດສອບລະບົບຂອງພວກເຮົາເປັນປະຈຳ ເພື່ອຄຸ້ມຄອງຂໍ້ມູນ ຂອງ ທ່ານຈາກການເຂົ້າເຖິງທີ່ບໍ່ໄດ້ຮັບອະນຸຍາດ, ການສູນຫາຍ ຫຼື ການ ນຳໃຊ້ ໄປໃນທາງຜິດໆ.

ບັນດາບໍຣິການສາທາຣະນະສຸກ ຣັດ ນິວເຊົາທ໌ເວລສ໌ເກັບມ້ຽນຂໍ້ມູນສຸຂພາບແບບ ບັນທຶກເປັນເຈັ້ຍ, ແບບລະບົບບັນທຶກອີເລັກໂທຣນິກໃນທ້ອງຖິ່ນ ແລະ ຕາມແບບ NSW HealtheNet.

HealtheNet ເປັນບັນທຶກແບບອີເລັກໂທຣນິກ ອັນປອດພັຍແລະຖືກນຳໃຊ້ທົ່ວຣັດໂດຍບໍຣິ ການສາທາຣະນະສຸກ ຣັດ ນິວເຊົາທ໌ເວລສ໌. HealtheNet ບັນຈຸບົດສລຸບຂອງຂໍ້ມູນສຸຂພາບຂອງທ່ານ ຕົວຢ່າງເຊັ່ນ, ບົດສລຸບການອອກ ໂຮງພະຍາບານ, ການກວດເລືອດຫາພະຍາດ ແລະ ຜົນການກວດວິນິສັຍໂຣກ ແລະ ຂໍ້ມູນ ກ່ຽວກັບຢາຂອງທ່ານ.

ຖ້າທ່ານໄປຫາບໍຣິການສາທາຣະນະສຸກບ່ອນ ໃດຕໍຕາມໃນຣັດ ນິວເຊົາທ໌ເວລສ໌, ໃນກໍຣະນີ ສ່ວນຫຼາຍແລ້ວ ບົດສລຸບຂອງຂໍ້ມູນນີ້ຈະມີ ໄວ້ໃຫ້ແກ່ພະນັກງານທາງການແພດທີ່ປິ່ນປົວ ທ່ານໂດຍຜ່ານທາງ HealtheNet.

## My Health Record (ບັນທຶກສຸຂພາບຂອງຂ້ອຍ)

My Health Record ເປັນລະບົບບັນທຶກ ສຸຂພາບແບບດິຈິຕອລແຫ່ງຊາດ ຂອງ ອອສເຕຣເລັຍ. ຊາວອອສເຕຣລຽນໝົດ ທຸກຄົນມີ My Health Record, ນອກເສັຍຈາກວ່າທ່ານເລືອກທີ່ຈະບໍ່ເອົາ.

ຖ້າທ່ານໄປຫາບໍຣິການສາທາຣະນະສຸກບ່ອນ ໃດຕໍຕາມໃນຣັດ ນິວເຊົາທ໌ເວລສ໌, ບົດສລຸບຂອງຂໍ້ມູນສຸຂພາບຂອງທ່ານຈະຖືກ ສົ່ງໄປຫາ My Health Record ຂອງທ່ານ. ນອກຈາກນີ້ພະນັກງານສາທາຣະນະສຸກ ຣັດ ນິວເຊົາທ໌ເວລສ໌ ຍັງອາດຈະເບິ່ງ ແລະ ສົ່ງ ຂໍ້ມູນໄປຫາ My Health Record ຂອງທ່ານ ອີກດ້ວຍ.

ຖ້າທ່ານມີ My Health Record, ແຕ່ບໍ່ຕ້ອງການ ໃຫ້ຂໍ້ມູນການນັດໝາຍຈາກນາຍໝໍຈຳເພາະ ຄົນໃດຄົນນຶ່ງ ຫຼື ການໄປໂຮງພະຍາບານຂອງທ່ານ ຖືກບັນທຶກເຂົ້າຢູ່ໃນ My Health Record, ທ່ານຕ້ອງແຈ້ງໃຫ້ຜູ້ໃຫ້ບໍຣິການດ້ານສຸຂພາບ ຊາບຕັ້ງແຕ່ຕອນຕົ້ນໆຂອງການໄປຫາຂອງທ່ານ.

NSW GOVERNMENT | Health

ເພື່ອເອົາຂໍ້ມູນເພີ້ມຕື່ມກ່ຽວກັບ My Health Record ກະຣຸນາໂທຣະສັບຫາໝາຍເລກ 1800 723 471 ຫຼື ເປີດເຂົ້າໄປເບິ່ງທີ່: www.myhealthrecord.gov.au

## ຕິດຕໍ່ພວກເຮົາ

ຖ້າທ່ານມີຄຳຖາມ ຫຼື ມີການຮ້ອງຮຽນໃດໆ ກ່ຽວກັບຄວາມເປັນສ່ວນຕົວຂອງຂໍ້ມູນ ສຸຂພາບຂອງທ່ານ ກະຣຸນາຕິດຕໍ່ Privacy Contact Officer (ເຈົ້າໜ້າທີ່ ຕິດຕໍ່ຄວາມເປັນສ່ວນຕົວ) ຕາມຫ້ອງການ ອະນາມັຍຣັດ ນິວເຊົາທ໌ເວລສ໌ ເຊິ່ງເກັບມ້ຽນຂໍ້ມູນສຸຂພາບ ຂອງທ່ານ.

ເພື່ອເອົາລາຍລະອຽດໃນການຕິດຕໍ່ Privacy Contact Officer ຈົ່ງເປີດເຂົ້າໄປເບິ່ງທີ່: www.health.nsw.gov.au/patients/privacy/Pages/privacy-contact.aspx

## ບໍຣິການການແປເອກກະສານ ແລະ ແປພາສາ

ຖ້າທ່ານຕ້ອງການຄວາມຊ່ວຍເຫຼືອໃນການຕິດຕໍ່ຫາບໍຣິການທີ່ກ່າວມາຂ້າງເທິງນີ້ ຫຼື ຕ້ອງການ ການແປເອກກະສານ ກະຣຸນາໂທຣະສັບຫາບໍຣິການ ການແປເອກກະສານແລະການແປພາສາ (TIS) ຕາມໝາຍເລກ 13 14 50.

ເພື່ອເຂົ້າຫາເຈັ້ຍຂໍ້ມູນຄວາມເປັນສ່ວນຕົວເປັນພາສາອື່ນໆ ຈົ່ງເຂົ້າຢ້ຽມເບິ່ງ Multicultural Health Communication Service ທີ່: www.mhcs.health.nsw.gov.au

Lao

# Privacy Leaflet for Patients

### How we protect your health information

# ເຈັ້ຍຂໍ້ມູນ ກ່ຽວກັບຄວາມເປັນສ່ວນຕົວ ສຳລັບ ຄົນປ່ວຍ

### ພວກເຮົາປົກປ້ອງຂໍ້ມູນສຸຂພາບຂອງທ່ານແບບໃດ

NSW GOVERNMENT | Health

## ການເກັບກຳຂໍ້ມູນສຸຂພາບຂອງທ່ານ

ເພື່ອໃຫ້ການປິ່ນປົວທີ່ເໝາະສົມແກ່ທ່ານ ພວກເຮົາອາດຈະຕ້ອງເກັບກຳຂໍ້ມູນສຸຂພາບ ກ່ຽວກັບທ່ານຢ່າງກວ້າງຂວາງ. ອັນນີ້ອາດ ຈະຮວມເຖິງຂໍ້ມູນກ່ຽວກັບສຸຂພາບຂອງທ່ານ, ການກວດເລືອດຫາພະຍາດ ແລະ ຜົນການ ກວດວິນິສັຍ ໂຣກ ເອັກຊ໌ເຣ ແລະ ການຖ່າຍ ຮູບພາບອື່ນໆ ແລະ ຂໍ້ມູນກ່ຽວ ກັບຢາ ຂອງທ່ານ.

ພວກເຮົາເກັບກຳຂໍ້ມູນຈາກທ່ານໂດຍກົງຖ້າ ຫາກເປັນໄປໄດ້. ຖ້າຫາກວ່າເປັນໄປບໍ່ໄດ້ ຫຼື ໃນກໍຣະນີສຸກເສີນ ພວກເຮົາອາດຈະຕ້ອງ ອ້າງອີງ ໃສ່ບັນທຶກສຸຂພາບອັນ ກ່ອນໆ ຂອງທ່ານ, ຜູ້ໃຫ້ການດູແລທ່ານຄົນອື່ນໆ ແລະ My Health Record (ບັນທຶກສຸຂພາບຂອງຂ້ອຍ) ຂອງທ່ານ.

ນອກຈາກນີ້ ພວກເຮົາຍັງອາດຈະ ຕ້ອງເກັບກຳ ຂໍ້ມູນຈາກສະມາຊິກຄອບຄົວ, ໝູ່ເພື່ອນ, ຜູ້ດູແລ ຫຼື ຄົນອື່ນເຊັ່ນນາຍພາສາຜູ້ຊຶ່ງສາມາດ ຊ່ວຍພວກເຮົາໃນການໃຫ້ການຮັກສາສຸຂພາບອັນເໝາະສົມແກ່ທ່ານ.

## ການນຳໃຊ້ ແລະ ການເປີດເຜີຍຂໍ້ມູນ

ຂໍ້ມູນສຸຂພາບຂອງທ່ານອາດຈະ ຖືກນຳໃຊ້ ໂດຍ ບໍຣິການສາທາຣະນະສຸກໃນຣັດ ນິວເຊົາທ໌ເວລສ໌, ຫຼື ຖືກເປີດເຜີຍໄປທາງນອກຂອງບໍຣິການສຸຂພາບ ເພື່ອເຮັດໃຫ້ມີການ ດູແລ ແລະ ການປິ່ນປົວອັນເໝາະສົມແກ່ທ່ານ.

ຕົວຢ່າງເຊັ່ນ ຂໍ້ມູນຂອງທ່ານອາດຈະຖືກ ນຳໃຊ້ ຫຼື ຖືກເປີດເຜີຍດັ່ງຕໍ່ລົງໄປນີ້:

- ຕໍ່ບັນດາບໍຣິການປິ່ນປົວສຸຂພາບອື່ນໆ, ໂຮງພະຍາບານ ຫຼື ຜູ້ຊ່ຽວຊານການແພດ ທີ່ພົວພັນກັບການດູແລ ແລະ ປິ່ນປົວທ່ານ.
- ຕໍ່ນາຍໝໍປະຈຳຕົວທີ່ທ່ານແຕ່ງຕັ້ງ ຮວມເຖິງ ຂໍ້ມູນທີ່ໄດ້ເອົາໃຫ້ພ້ອມກັບເອກກະສານການອອກໂຮງພະຍາບານ ແລະ ຈົດໝາຍແນະນຳ ສົ່ງຂອງທ່ານ.
- ຕໍ່ບໍຣິການ ຣົດໂຮງພະຍາບານ ຣັດ ນຊວ.
- ຕໍ່ My Health Record.
- ເພື່ອຕິດຕໍ່ຫາທ່ານຢູ່ເຮືອນກ່ຽວກັບການນັດໝາຍການຕິດຕາມກວດເບິ່ງ.
- ຕໍ່ຜູ້ດູແລທ່ານເພື່ອຊ່ວຍພວກເຂົາໃນການດູ ແລທ່ານ.
- ເພື່ອຕິດຕໍ່ທ່ານເພື່ອຂໍຄຳຄິດເຫັນກ່ຽວກັບບັນດາບໍຣິການຕ່າງໆທີ່ທ່ານໄດ້ຮັບ.
- ຕໍ່ພະນັກງານໃຫ້ຄວາມດູແລຂອງທາງໂບດ ຮວມເຖິງຄຸນພໍ່ທີ່ຢູ່ໃນໂຮງພະຍາບານ ທີ່ໃຫ້ການດູແລ ທາງດ້ານຈິດໃຈ ແລະ ທາງສາສນາ.
- ຕໍ່ບັນດານັກຮຽນ ແລະ ພະນັກງານອື່ນໆ ເພື່ອຈຸດປະສົງດ້ານການເຝິກຫັດ.
- ຕໍ່ບັນດາບໍຣິການທາງດ້ານອະນາມັຍ ແລະ ພາກສ່ວນທີ່ສາມທີ່ໄດ້ຖືກຮັບຮູ້ເພື່ອ ຊ່ວຍ ປ້ອງກັນການຄຸກຄາມທີ່ພວມຈະເກີດຂຶ້ນ ຕໍ່ຊີວິດໃຜຜູ້ນຶ່ງ, ຕໍ່ສຸຂພາບ ຫຼື ສວັດດີພາບເຊັ່ນວ່າຢູ່ໃນເຫດສຸກເສີນ.
- ເພື່ອຈຸດປະສົງທີ່ກ່ຽວພັນກັບການບໍຣິຈາກ ອະວັຍວະ ຫຼື ເນື້ອເຍື່ອ. ອັນນີ້ອາດຈະ ຮວມເຖິງຣາຍລະອຽດການຕິດຕໍ່ຍາດພີ່ນ້ອງທີ່ໃກ້ຊິດ.
- ເພື່ອຈຸດປະສົງຕ່າງໆທີ່ກ່ຽວກັບການເຮັດວຽກ ແລະ ກິຈກັມບໍຣິຫານຕ່າງໆ ຮວມເຖິງ ເງິນ ກອງທຶນ, ການວາງແຜນ, ການປັບປຸງຄວາມ ປອດພັຍ ແລະ ຄຸນນະພາບໃຫ້ດີຂຶ້ນ.
- ເພື່ອສືບສວນ ການຮ້ອງຮຽນ ຫຼືເຫດການ ທີ່ເກີດຂຶ້ນ.
- ເພື່ອຈັດການການດຳເນີນການທາງກົດໝາຍ ຫຼື ການຮຽກຮ້ອງທີ່ຜູ້ປ່ວຍມີຕໍ່ບໍຣິການ ສຸຂພາບ.

**ຖ້າທ່ານບໍ່ຕ້ອງການໃຫ້ພວກເຮົາເກັບກຳ ນຳໃຊ້ ຫຼື ເປີດເຜີຍຂໍ້ມູນບາງຢ່າງ ກ່ຽວກັບ ທ່ານ ທ່ານຈະຕ້ອງແຈ້ງໃຫ້ພວກເຮົາຊາບ ແລະ ພວກເຮົາກໍຈະປຶກສາຫາລືກັບທ່ານເຖິງຜົນ ສະທ້ອນ ທີ່ຕາມມາທີ່ອາດຈະມີຕໍ່ການດູແລ ສຸຂພາບຂອງທ່ານ.**

ນອກຈາກນີ້ ກົດໝາຍຍັງອະນຸຍາດ ຫຼື ຕ້ອງ ການໃຫ້ຂໍ້ມູນສ່ວນຕົວຂອງທ່ານຖືກເປີດເຜີຍຕໍ່ພາກສ່ວນທີສາມ ຍົກຕົວຢ່າງເຊັ່ນ:

- ຕໍ່ຫ້ອງການຣັຖບານຂັ້ນຣັດ ແລະ ຣັຖບານກາງ ເພື່ອຈຸດປະສົງການລາຍງານ ທີ່ອອກເປັນກົດໝາຍວ່າຕ້ອງແຈ້ງ ເຊັ່ນແຈ້ງໂຣກຕິດຕໍ່, ໂຣກມະເຮັງ ແລະ ພະຍາດອື່ນໆທີ່ຕ້ອງແຈ້ງໃຫ້ທາງການຊາບ, ລາຍງານ ການເກີດ ແລະ ການຕາຍ ແລະ ເພື່ອໃຫ້ລາຍລະອຽດກ່ຽວກັບ ເມດິແຄຣ໌.
- ຕໍ່ນັກຄົ້ນຄວ້າເພື່ອໂຄງການ ການຄົ້ນຄວ້າ ທີ່ເປັນປໂຍດຕໍ່ສາທາຣະນະຊົນທີ່ໄດ້ຮັບການອະນຸຍາດຈາກ Human Research Ethics Committee.
- ຕໍ່ຫ້ອງການຂອງການບໍຣິການດ້ານສຸຂພາບ ຫຼື ຫ້ອງການທີ່ມີອຳນາດທາງກົດໝາຍ, ເຊັ່ນວ່າ ຕຳຣວດ, ຖ້າທ່ານເອົາຂໍ້ມູນກ່ຽວ ກັບອາຊຍາກັມອັນຮ້າຍແຮງໃຫ້ພວກເຮົາ ຮວມເຖິງການທຳຮ້າຍຮ່າງກາຍ, ຄວາມ ຮຸນແຮງໃນຄອບຄົວ ແລະ ການທາຣຸນເດັກ.
- ຕໍ່ຫ້ອງການອື່ນໆຖ້າຂໍ້ມູນນັ້ນກ່ຽວພັນກັບ ຄວາມປອດພັຍ, ສວັດດີການ ຫຼື ຄວາມຢູ່ດີ ຂອງເດັກ ຫຼື ຄົນໜຸ່ມ.
- ເພື່ອປະຕິບັດຕາມຄຳສັ່ງໝາຍເກາະ ຫຼື ການສັ່ງຄົ້ນຈາກສານ ຖ້າຂໍ້ມູນສ່ວນຕົວຂອງ ທ່ານ ຖືກກຳນົດໃຫ້ໃຊ້ເປັນຫຼັກຖານຢູ່ໃນສານ.

## ໂຄງການປະກັນພັຍຜູ້ເສັຍອົງຄະແຫ່ງຊາດ (NDIS)

ຖ້າທ່ານ ຫຼື ໃຜຜູ້ນຶ່ງທີ່ຕ່າງໜ້າທ່ານ ເອົາ ສຳເນົາ ຂອງການວາງແຜນຂອງ NDIS ຫຼື ເອກກະສານຂອງ NDIS ອື່ນໆ ໃຫ້ພວກເຮົາ ພວກເຮົາອາດຈະນຳໃຊ້ ຫຼື ເປີດເຜີຍຂໍ້ມູນນີ້ ເພື່ອຈຸດປະສົງທີ່ກ່ຽວພັນກັບການດູແລສຸຂພາບຂອງທ່ານ ແລະ ບໍຣິການທາງສົງເຄາະຕ່າງໆ. ອັນນີ້ອາດຈະຮວມເຖິງການແບ່ງປັນຂໍ້ມູນກັບ ບັນດາຫ້ອງການຣັຖບານ, ຝ່າຍເອກກະຊົນ ຫຼື ບັນດາອົງກອນທີ່ບໍ່ແມ່ນຣັຖບານ ເພື່ອຊ່ວຍ ທັງບັນດາບໍຣິການທີ່ກ່ຽວພັນແລະບໍ່ກ່ຽວພັນກັບສຸຂພາບໃຫ້ເຂົາເຈົ້າສາມາດສນອງບໍຣິການທີ່ຖືກກັບຄວາມຕ້ອງການຂອງທ່ານ.

## ການເຂົ້າເຖິງຂໍ້ມູນຂອງທ່ານ

ທ່ານມີສິດທີ່ຈະຂໍເຂົ້າເຖິງຂໍ້ມູນສຸຂພາບຂອງທ່ານທີ່ພວກເຮົາເກັບມ້ຽນໄວ້. ຕາມທັມມະດາແລ້ວທ່ານຈະຕ້ອງທຳການ ຮ້ອງຂໍ ເປັນລາຍລັກອັກສອນ ພ້ອມທັງສເນີເອກກະສານຢັ້ງຢືນຕົວຂອງທ່ານ. ທ່ານອາດຈະຕ້ອງຈ່າຍຄ່າທຳນຽມຖ້າທ່ານຕ້ອງການສຳເນົາຂອງ ບັນທຶກ ສຸຂພາບຂອງທ່ານ. ພວກເຮົາຕອບຮັບການຂໍເອົາການເຂົ້າເຖິງ ຂໍ້ມູນນີ້ຢ່າງໄວເທົ່າທີ່ໄວໄດ້, ແລະໃນກໍຣະນີ ສ່ວນຫຼາຍຈະບໍ່ຊ້າກວ່າ 28 ມື້.

ການເຂົ້າເຖິງຂໍ້ມູນສ່ວນຕົວຂອງທ່ານອາດຈະ ຖືກປະຕິເສດໃນກໍຣະນີພິເສດ ເຊັ່ນ ວ່າຖ້າການໃຫ້ເຂົ້າເຖິງຂໍ້ມູນຂອງທ່ານ ຈະເຮັດໃຫ້ທ່ານ ຫຼື ໃຜອີກຄົນນຶ່ງມີຄວາມ ສ່ຽງຕໍ່ອັນຕຣາຍທາງຈິດໃຈຫຼືຮ່າງກາຍ.

ຖ້າທ່ານເຊື່ອວ່າຂໍ້ມູນກ່ຽວກັບທ່ານທີ່ພວກເຮົາ ເກັບມ້ຽນໄວ້ນັ້ນໄດ້ມີສິ່ງບໍ່ຖືກຕ້ອງ ຫຼື ມີສິ່ງຜິດ ກະຣຸນາແຈ້ງໃຫ້ພວກເຮົາຊາບແລະ ພວກເຮົາຈະດັດແກ້ ຫຼື ເພີ້ມຕື່ມຂໍ້ມູນໃສ່ບັນທຶກ ສຸຂພາບຂອງທ່ານ.

ການຮ້ອງຂໍການເຂົ້າເຖິງບັນທຶກສຸຂພາບຂອງທ່ານຕ້ອງໄດ້ສົ່ງໄປຫາ Medical Records Department ຫຼື ຜູ້ຈັດການ ຂອງຫ້ອງການບໍຣິການສຸຂພາບທີ່ທ່ານໄປຫາ.